

ຄວາມເຊື່ອ: ຄົນທີ່ມີສິວຢູ່ຄາງເປັນຄົນທີ່ມັກເລື່ອງທາງເພດ (ສິວຫື່ນ)

ເມື່ອເພດຊາຍ ແລະ ເພດຍິງເລີ່ມເຂົ້າສູ່ການເປັນຜູ້ໃຫຍ່, ຮ່າງກາຍຂອງມະນຸດຈະມີການປ່ຽນແປງຫຼາຍຢ່າງ. ສິ່ງໜຶ່ງທີ່ເຫັນໄດ້ແຈ້ງກໍຄືການເກີດສິວຕາມໃບໜ້າ ແລະ ຮ່າງກາຍ. ນີ້ແມ່ນຜົນຂອງການປ່ຽນແປງຂອງທາດເຄມີ (ໂຮໂມນ) ໃນຮ່າງກາຍ ເຊິ່ງເປັນເລື່ອງປົກກະຕິຂອງການຈະເລີນເຕີບໂຕຂອງເພດຍິງ ແລະ ຊາຍໃນຊ່ວງນີ້. ຖ້າເຮົາບໍ່ຮັກສາຄວາມສະອາດກໍຈະເກີດມີສິວຂຶ້ນຕາມໃບໜ້າ ແລະ ສ່ວນອື່ນໆຂອງຮ່າງກາຍ.